# ແຜ່ນດິນຄືຊີວິດ



ໂຮມເລື່ອງສັ້ນຂຽນໂດຍນັກຂຽນມັດທະຍົມ

# ແຜ່ນດິນຄືຊີວິດ



# ແຜ່ນດິນຄືຊີວິດ

ຂຽນໂດຍ: ບ. ແຫລ້ ເພັດສະໄໝ, ສຳລານ, ບ. ຕິ່ງໜ່ອຍ ສົມພານມິດ, ນົກນ້ອຍ, ສີບານ, ບ. ສຸດທິດາ ພະຫລັກຄຳ, ທ. ສັນຕິ ບັດທະພົນ, ກັນຫາ, ບ. ສີໄໝ ແກ້ວມະນີວົງ, ບ. ມະນີວັນ ພົມມະຈັນ, ຊ້າງນ້ອຍ/ ບ. ວິສຸດາ ບົວສະຫວັນ, ບ. ໝຸດສະດີ, ສອນໄຊ, ບ. ສີແສງເດືອນ ລາສະຫວັດດີ, ບ. ໄມບຸນ, ຄຳປັນ, ໄພສີຄາມ, ບ. ປ່ອກ ໄຊຍະເສນ, ທ. ດວງເດດ ຈັນທະມາລີ ແລະທ. ບົລະມິດ ບິນທະຂັນ.

ອອກແບບໜ້າປົກ: **MV Graphic Designco.,Ltd**

ຮູບປະກອບແລະຮູບໜ້າປົກ: ທົງສາ ໂຄດສຸວັນ

ຄະນະບັນນາທິການແລະຄະນະຈັດພິມ: ບຸນທັນ ພົງພິຈິດ, ບຸນເລີດ ສີວິໄຊ

ພິສູດອັກສອນ: ກະວິນ ກຽງຄຳຊົນນີ

ຈັດໜ້າ: ສຸພັດສອນ

ພິມທີ່: ໂຮງພິມສີສະຫວາດ

ທະບຽນອະນຸຍາດພິມ: **166/ພຈ 10102008**

ຈຳນວນພິມ: **2.000** ຫົວ

ອຸປະຖຳໂດຍ: ສະມາຄົມບາງຊາດເພື່ອມະນຸດແລະສິ່ງແວດລ້ອມ (GAPE)

# ຄຳນຳ

ມະນຸດເຮົາດຳລົງຊີວິດຢູ່ຄຽງຄູ່ກັບທຳມະຊາດມາໄດ້ຫລາຍລ້ານປີແລ້ວ. ມະນຸດໄດ້ຮຽນຮູ້ວ່າຖ້າຫາກທຳມະຊາດຖືກທຳລາຍໄປ ມະນຸດກໍຈະປະເຊີນກັບໄພວິບັດແລະຄວາມສູນເສຍຢ່າງໃຫຍ່ຫລວງ. ໃນໂລກເຮົາປັດຈຸບັນມີຫລາຍຊົນເຜົ່າທີ່ຍັງມີຄວາມເຊື່ອຖືວ່າແຜ່ນທໍລະນີ ຫ້ວຍນ້ຳລຳເຊແລະພູຜາປ່າໄມ້ມີສິ່ງສັກສິດປົກປັກຮັກສາຢູ່ ສະນັ້ນມະນຸດຄວນໃຫ້ຄວາມເຄົາລົບຢຳເກງ ບໍ່ຄວນມ້າງເພທຳລາຍສິ່ງເຫລົ່ານີ້.

ທຳມະຊາດ ສະພາບແວດລ້ອມແລະມວນມະນຸດຈະຕ້ອງຢູ່ຮ່ວມກັນຢ່າງປະສົມກົມກືນ ບໍ່ເອົາລັດເອົາປຽບແລະທຳລາຍລ້າງກັນແລະກັນ ຈຶ່ງຈະຍືນຍົງຢູ່ບົນໂລກນີ້ໄດ້ຕາບນານເທົ່ານານ. ແຕ່ບົດຮຽນຈາກອະດີດເຖິງປັດຈຸບັນສະແດງໃຫ້ເຫັນວ່າ ຍ້ອນຄວາມຮູ້ເທົ່າບໍ່ເຖິງການ ຍ້ອນຄວາມໂລບມາກໂລພາຢ່າງບໍ່ມີສິ້ນສຸດ ເຮັດໃຫ້ມະນຸດກາຍເປັນຜູ້ທຳລາຍທຳມະຊາດແລະເຮັດໃຫ້ສິ່ງແວດລ້ອມເສື່ອມໂຊມ.

ແນວໃດກໍຕາມ ຍັງບໍ່ສວາຍເກີນໄປທີ່ພວກເຮົາຈະຊ່ວຍກັນເຮັດສິ່ງດີໆດ້ວຍການໃຫ້ຄວາມຮູ້ແລະສ້າງຈິດສຳນຶກກ່ຽວກັບການປົກປັກຮັກສາທຳມະຊາດແລະສະພາບແວດລ້ອມ. ຊາວນາຊາວສວນຍີ່ປຸ່ນມີຄະຕິປະຈຳໃຈໃນການທຳມາຫາກິນວ່າ ຈະບໍ່ເຮັດໃຫ້ດິນດອນຕອນຫຍ້າເສື່ອມໂຊມ ຈະບໍ່ເຮັດໃຫ້ຫ້ວຍນ້ຳລຳເຊເປື້ອນເປິະແລະຈະບໍ່ເຮັດໃຫ້ອາກາດເປັນພິດ.

ປຶ້ມ *"ແຜ່ນດິນຄືຊີວິດ"* ແມ່ນປຶ້ມໂຮມເລື່ອງສັ້ນທີ່ຂຽນຂຶ້ນໂດຍນັກຮຽນມັດທະຍົມຢູ່ແຂວງພາກໃຕ້ຂອງລາວ ເປັນກໍລະນີສຶກສາແລະໃຫ້ຄວາມຮູ້ກ່ຽວກັບຜົນກະທົບຕໍ່ທຳມະຊາດແລະສະພາບແວດລ້ອມ ເພື່ອໃຫ້ພວກເຮົາມີສະຕິລະວັງຕົວ ຫລີກລ່ຽງບໍ່ໃຫ້ເກີດຄວາມສູນເສຍ ເຮັດໃຫ້ປະຊາຊົນສາມາດທຳມາຫາກິນຢູ່ບົນຜືນແຜ່ນດິນຕອນນີ້ໄດ້ຢ່າງປອດໄພ.

ເວົ້າແນວນີ້ກໍບໍ່ໝາຍຄວາມວ່າປຶ້ມ *"ແຜ່ນດິນຄືຊີວິດ"* ຈະກີດກັ້ນການພັດທະນາໃນເຂດຊົນນະບົດ, ແຕ່ປຶ້ມເຫລັ້ມນີ້ເປັນການໃຫ້ບົດຮຽນແລະປຸກສະຕິໃຫ້ມວນຊົນຜູ້ເປັນເຈົ້າຂອງເຂດນ້ຳດິນແດນ ໄດ້ມີຄວາມຮອບຄອບກ່ອນຈະເຮັດສິ່ງໃດສິ່ງໜຶ່ງທີ່ມີການຕິດພັນຢູ່ກັບດິນດອນຕອນຫຍ້າທີ່ຕົນຮັບຜິດຊອບ. ພ້ອມນັ້ນກໍຕ້ອງມີສະຕິທາງດ້ານກົດໝາຍເພື່ອເປັນບ່ອນອີງບໍ່ໃຫ້ຕົກທ່າຮັບ.

ຄະນະຈັດພິມ

# ຄຳເຫັນຂອງກົມພິມຈຳໜ່າຍ

ປຶ້ມໂຮມເລື່ອງສັ້ນທີ່ມີຊື່ວ່າ: *"ແຜ່ນດິນຄືຊີວິດ"* ເປັນການປູກຈິດສຳນຶກໃຫ້ຮູ້ແລະຊາບຊຶ້ງກ່ຽວກັບການດຳເນີນການຜະລິດໃຫ້ເປັນສິນຄ້າໃນຮູບການຕ່າງໆທາງດ້ານຫລັກການຫລືນິຕິທຳທີ່ໄດ້ກຳນົດ. ສະນັ້ນຜູ້ທຳການຜະລິດ ຫລືຜູ້ເປັນເຈົ້າຂອງຊັບສິນທີ່ດິນ ຈະເປັນຮູບການໃດໆກໍຕາມຈະຕ້ອງອີງໃສ່ລະບຽບກົດໝາຍເປັນຫລັກ. ອີກປະການໜຶ່ງ ການບຸກເບີກຫລືການໃຫ້ສຳປະທານກໍຕ້ອງມີຈິດສຳນຶກເຖິງຄວາມທີ່ຈະໃຫ້ປະໂຫຍດຫລືຄວາມເປັນອັນຕະລາຍຕໍ່ສະພາບແວດລ້ອມທີ່ຈະເປັນຜົນສະທ້ອນກັບມາລົງໂທດຄົນ.

ເລື່ອງລາວຕ່າງໆຢູ່ໃນປຶ້ມຫົວນີ້ ໄດ້ສ່ອງແສງໃຫ້ຄົນເຮົາ ໂດຍສະເພາະຢູ່ຊົນນະບົດ ຈະຕ້ອງມີຄວາມຮອບຄອບ ກ່ອນຈະລົງມືເຮັດອັນໃດອັນໜຶ່ງລົງໄປ ຈຶ່ງບໍ່ຄວນເຮັດຕາມລຳພັງ ເພື່ອບໍ່ໃຫ້ຕົກຢູ່ໃນທ່າຮັບ.

ກົມພິມຈຳໜ່າຍຂໍສະແດງຄວາມຊົມເຊີຍມາຍັງຄະນະຈັດທຳປຶ້ມ *"ແຜ່ນດິນຄືຊີວິດ"* ເຫລັ້ມນີ້, ພ້ອມນີ້ກໍຂໍຊົມເຊີຍມາຍັງຜູ້ທີ່ໄດ້ອຸທິດປາຍປາກກາໃຫ້ມີຄຸນຄ່າແກ່ສັງຄົມ ແລະກໍເພື່ອປະກອບສ່ວນໃນການສົ່ງເສີມການອ່ານອີກດ້ວຍ. ປຶ້ມເຫລັ້ມນີ້ເປັນຜະລິດຕະພັນພິມຈຳໜ່າຍອອກມາໃໝ່ເພື່ອເປັນການສ້າງສັນສັງຄົມແລະໃຫ້ຄວາມຮູ້ນອກລະບົບຢ່າງກວ້າງຂວາງ.

ວຽງຈັນວັນທີ 19/09/2008

ກົມພິມຈຳໜ່າຍ

# ສາລະບານ


ຈັບອັບແສງ ........ 1
ມໍລະດົກຂອງບ້ານ ........ 5
ຄຳປະຕິຍານຂອງຊຽງເຄນ ........ 10
ເຂັດຈົນຕາຍ ........ 15
ທໍລະນີສະອື້ນ ........ 19
ຢາກເກີດເປັນເທວະດາ ........ 29
ຝັ່ງຄົນທັງເປັນ ........ 35
ແຜ່ນດິນນີ້ຍັງມີຄົນດີ ........ 40
ພວກເຮົາຜິດຫຍັງ? ........ 45
ຄວາມຫວັງທີ່ເລືອນລາງ ........ 49
ແຜ່ນດິນຄືຊີວິດ ........ 55
ຄ່າແຮງງານ ........ 62
ໜອງນ້ຳມັດຈຸລາດ ........ 65
ຄຳສາລະພາບຂອງລຸງບຸນ ........ 71
ວັນເວລາປ່ຽນໄປ ........ 75
ວັດຫລັງໃໝ ........ 80
ຫຍ້າເພັດສະຄາດ ........ 87
ແກ້ວຍອດຍາງ ........ 92
ນາຍບ້ານ ........ 97
ດອກເບ້ຍ ........ 103

# ຈັບອັບແສງ

*ໂດຍ: ບ. ແຫລ້ ເພັດສະໄໝ*

ທີ່ໂຮງໝໍແຫ່ງໜຶ່ງ ພາຍໃນຫ້ອງທີ່ງຽບສະຫງັດມີຜູ້ປ່ວຍຢູ່ໃນຊະຕາກໍາດຽວກັນ ນອນລຽນລາຍຢູ່ປະມານແປດຕຽງ. ຢູ່ເທິງເພດານມີພັດລົມແຂວນຢູ່ສາມອັນກໍາລັງປິ່ນລ່ວງຂວ່າງໆສົ່ງສຽງດັງອິດໆຄືກັບວ່າບໍ່ມີນໍ້າມັນຢອດໃສ່ຈັກເທື່ອ.

ຢູ່ຕຽງຕິດຝາທາງປະຕູອອກມີຮ່າງຄີງຍິງສາວອາຍຸປະມານສິບເກົ້າປີກໍາລັງແຫງນໜ້າເບິ່ງເພດານດ້ວຍຫົວໃຈທີ່ໄຮ້ຈຸດໝາຍປາຍທາງແລະໝົດຄວາມຫວັງໃນຊີວິດ.

ແຕ່ກ່ອນດາວອອນແມ່ນຍິງສາວຜູ້ໜຶ່ງທີ່ທຸກໆຄົນໄດ້ພົບເຫັນ ຕ້ອງຕົກຕະລຶງຍ້ອນຄວາມງາມຂອງນາງ ກິລິຍາທ່າທີເວົ້າຈາເໝືອນກັບວ່າເປັນແມ່ຍິງລາວທີ່ມີຄຸນສົມບັດດີເອົາແທ້ເອົາວ່າ.

ບໍ່ຄິດເລີຍວ່າ ຍິງສາວທີ່ເອີ້ນວ່າໂດດເດັ່ນໃນສັງຄົມຍຸກໃໝ່ ທັງເປັນຜູ້ທີ່ມີຊື່ສຽງໃນເລື່ອງຄວາມງາມ ຈະຕ້ອງມານອນຢູ່ເທິງຕຽງໂດຍໄຮ້ຍາດຂາດມິດຫລຽວແລເບິ່ງແຍງ.

ມີພຽງຍິງແກ່ຄົນໜຶ່ງຊຶ່ງເປັນແມ່ ທໍາໜ້າທີ່ມາເຝົ້າເປັນບາງຄັ້ງຄາວເພາະທາງໂຮງໝໍບໍ່ຢາກໃຫ້ຜູ້ໃດເຂົ້າໃກ້ຜູ້ປ່ວຍ.

ດາວອອນນໍ້າຕາໄຫລແລ້ວທວນຄິດເຖິງເບື້ອງຫລັງທີ່ເຄີຍຮ່ວມທຸກຮ່ວມສຸກກັບຄອບຄົວ. ນາງຍັງຈື່ໄດ້ດີ ມື້ນັ້ນຫລັງຈາກໄປຕັກບາດບຸນເຂົ້າພັນສາທີ່ວັດກັບມາເຮືອນແລ້ວ ກໍມີໝູ່ທີ່ຮູ້ຈັກກັນແຕ່ຄາວຮຽນຢູ່ຫ້ອງ ມ.6 ມາຊວນໄປຫາເງິນ.

"ດາວອອນ! ດາວອອນ!" ມະໄລທອງເອີ້ນຢູ່ໜ້າບ້ານ.

"ອາວ! ໄປຈັ່ງໃດມາຈັ່ງໃດຈຶ່ງມາຮອດພີ້" ດາວອອນທ້ວງເມື່ອເຫັນເພື່ອນເກົ່າທີ່ເຄີຍຮຽນຮ່ວມຫ້ອງແລະໄດ້ຈາກກັນໄປດົນນານ.

"ດາວອອນ... ດຽວນີ້ໂຕເຮັດວຽກຫຍັງຢູ່?" ມະໄລທອງຖາມແບບນິກຕໍ່.

"ຢູ່ເຮືອນລ້າໆ... ເຮັດວຽກຮົ້ວວຽກສວນຊ່ອຍຄອບຄົວນີ້ລະ" ດາວອອນຕອບຕາມຄວາມຈິງ.





24 / VII
ຫ້າມຈຳໜ່າຍ

"ໂອ້ຍ! ຍິງງາມໆຄືໂຕນີ້ໄປເຮັດວຽກນຳເຮົາແມ່ ຮັບຮອງວ່າໄດ້ເງິນດີ... ເຮັດວຽກກໍບໍ່ໜັກດອກ... ມີແຕ່ຮັບແຂກຊື່ໆ" ມະໄລທອງອະທິບາຍ.

ຕອນແລງດາວອອນເວົ້າສູ່ແມ່ຟັງວ່າຈະໄປຫາເງິນມາຊ່ວຍຄອບຄົວ. ແມ່ຫ້າມແນວໃດນາງກໍບໍ່ຟັງ ມີແຕ່ວ່າຈະໄປລູກດຽວ ເພາະການໄປເຮັດວຽກນຳມະໄລທອງຈະໄດ້ນຸ່ງເຄື່ອງງາມໆແລະຫາເງິນສະບາຍ.

ໃນທີ່ສຸດດາວອອນກໍເກັບເອົາເຄື່ອງຂອງລົງຈາກເຮືອນ ລັດລຶດໄປບ່ອນນັດໝາຍກັບມະໄລທອງ ທ່າມກາງສຽງຮ້ອງໄຫ້ຂອງຜູ້ເປັນແມ່ທີ່ອາໄລອາວອນ ແຕ່ດາວອອນກໍບໍ່ຍອມຫລຽວຫລັງມາເບິ່ງແມ່ພໍບາດ.

ໜຶ່ງປີຜ່ານໄປ ບໍ່ມີຂ່າວຄາວຂອງດາວອອນເລີຍ ບໍ່ຮູ້ວ່າໄປເຮັດວຽກຢູ່ໃສ ຫົວໃຈຂອງແມ່ເກືອບແຕກສະລາຍຍ້ອນຄິດຮອດລູກ.

ປີທີສອງມີຄົນມາສົ່ງຂ່າວວ່າໃຫ້ໄປເບິ່ງລູກສາວທີ່ນອນຮັກສາໂຕຢູ່ໂຮງໝໍແຂວງ. ປ້າມີເກືອບເປັນລົມເມື່ອເຫັນລູກສາວທີ່ແສນຮັກມີຮ່າງກາຍປ່ຽນແປງຈາກໜ້າມືເປັນຫລັງມື ກຳລັງນອນລໍຄອຍຄວາມຕາຍຢູ່.

ປ້າມີຮ້ອງໄຫ້ຂຶ້ນ ຄິດວ່າລູກສາວປ່ອຍໂຊຍ້ອນໄປເຮັດວຽກໜັກແລະຂາດຄວາມອົບອຸ່ນ.

ເມື່ອທ່ານໝໍມາເຫັນປ້າກໍຊິ່ມໃສ່ຫູປ້າຄ່ອຍໆວ່າ ລູກສາວຂອງປ້າເປັນໂລກເອດ.

ສາມມື້ຕໍ່ມາມີພະຍາບານຫ້າຄົນ ເອົາຜ້າຂາວຫຸ້ມຫໍ່ສົບທີ່ໄຮ້ວິນຍານຂອງດາວອອນໃສ່ລໍ້ຍູ້ໄປໄວ້ຢູ່ໂຮງເຢັນເພື່ອລໍຖ້າພິທີເຜົາສົບ.

ຊີວິດຂອງດາວອອນເໝືອນດອກໄມ້ກຳລັງເບັ່ງບານໃນລະດູບານໃໝ່ ເໝືອນດວງຈັນຢູ່ເທິງຟ້າ ໜ້າເສຍດາຍທີ່ຕ້ອງມາອັບແສງລົງກາງຄັນ.

# ມໍລະດົກຂອງບ້ານ

*ໂດຍ: ສຳລານ*

ຄູບາບຸນມີເປັນເຈົ້າອາວາດວັດບ້ານໄຮ່ ຍ້ອນຄວາມເປັນອາວຸໂສ ເພິ່ນຈຶ່ງອຸທິດຕົນໃຫ້ແກ່ການເຜີຍແຜ່ຄຳສອນຂອງພຸດທະສາສະໜາ ສະນັ້ນເພິ່ນຈຶ່ງເປັນທີ່ເຄົາລົບຢຳເກງຂອງຊາວບ້ານ.

ມື້ໜຶ່ງຫລັງຈາກສັນຈັ່ງຫັນແລ້ວ ຄູບາບຸນມີມານັ່ງຊຶງຢູ່ໜ້າກຸຕິ. ເພິ່ນນັ່ງທົບທວນສິ່ງທີ່ເພິ່ນເຄີຍບອກເຄີຍສອນຊາວບ້ານຕອນທີ່ພວກເຂົາເຈົ້າມາຟັງເທດຢູ່ວັດ. ເພິ່ນສອນຊາວບ້ານໃຫ້ປະລະຄວາມໂລບມາກໂລພາ ບໍ່ເອົາຂອງເພິ່ນມາເປັນຂອງໂຕ ເພາະມັນເປັນບາບແລະຊາວບ້ານຜູ້ໃດກໍປະຕິບັດຕາມຄຳສັ່ງສອນຂອງເພິ່ນໂດຍດີ. ແຕ່ເມື່ອບໍ່ດົນມານີ້ ພວກຊາວບ້ານມາຈົ່ມສູ່ຄູບາຟັງວ່າ ມີຄົນຈາກໃນເມືອງເຂົ້າມາຕັດຕົ້ນໄມ້ດູ່ໄມ້ແຄນຢູ່ປ່າຫົວບ້ານໄປສີ່ຫ້າຕົ້ນແລ້ວ.

"ເປັນຫຍັງພວກເຈົ້າບໍ່ຫ້າມພວກເຂົາ?" ຄູບາເວົ້ານຳນາຍບ້ານທີ່ເອົາຈັ່ງຫັນມາວັດ.

"ຫ້າມພວກເຂົາບໍ່ໄດ້ດອກ ເຂົາເອົາໃບອະນຸຍາດຈາກເມືອງມາອ້າງ" ນາຍບ້ານຕອບພ້ອມທັງຫາຍໃຈອອກບາດຍາວໆ.

"ພວກເຈົ້າຕ້ອງເຮັດແນວໃດແນວໜຶ່ງ ຖ້າບໍ່ດັ່ງນັ້ນ ຊັບສິນບັດຂອງບ້ານເຮົາຊິໝົດໃດ໋!" ຄູບາໃຫ້ຄວາມເຫັນ.

"ພວກເຮົາເປັນປະຊາຊົນທຳມະດາສາມັນຈະເຮັດຫຍັງໄດ້!" ນາຍບ້ານເວົ້າແບບຍອມຈຳນົນ.

ນັບຕັ້ງແຕ່ການສົນທະນາກັບນາຍບ້ານໃນມື້ນັ້ນ ຄູບາບຸນມີກໍຄຶດຫາວິທີຊ່ວຍຊາວບ້ານ ເພາະຄວາມທຸກຂອງຊາວບ້ານກໍຄືຄວາມທຸກຂອງເພິ່ນຄືກັນ.

ປ່າຫົວບ້ານເປັນປ່າດົບ ມີຕົ້ນໄມ້ດູ່ແລະໄມ້ແຄນປະມານສາມສິບຕົ້ນມີຄວາມສູງສິບຫ້າແມັດຂຶ້ນໄປ. ແຕ່ລະມື້ຊາວບ້ານຈະເຂົ້າໄປເກັບຜັກປ່າ, ຍອດຫວາຍ, ຢາງນາງແລະເຫັດມາເປັນອາຫານ. ນອກຈາກນີ້ແລ້ວຍັງມີເຄືອແຫມແລະສະໝຸນໄພຫລາຍຊະນິດ ຊຶ່ງຊາວບ້ານໃຊ້ໂດຍບໍ່ຕ້ອງເພິ່ງພາຢາຫລວງ ເນື່ອງຈາກບ້ານຕັ້ງຢູ່ຫ່າງໄກຈາກຕົວເມືອງ.





ຖ້າຫາກຄອບຄົວໃດຕ້ອງການຕັດໄມ້ມາປຸກເຮືອນ ເຂົາເຈົ້າຈະສະເໜີຕໍ່ກອງປະຊຸມບ້ານ ເພື່ອຂໍອະນຸຍາດຕັດໄມ້. ຕົ້ນໄມ້ດູ່ໄມ້ແດງເຫລົ່ານີ້ໃຫຍ່ສູງຈົນມາຮອດທຸກມື້ນີ້ກໍຍ້ອນວ່າ ຜູ້ເຖົ້າຜູ້ແກ່ຂອງບ້ານພາກັນປົກປັກຮັກສາໄວ້ເປັນມໍລະດົກຕົກທອດໃຫ້ລູກຫລານ.

ແລງມື້ໜຶ່ງຄູບາບຸນມີເອີ້ນຊາວບ້ານມາປະຊຸມຢູ່ວັດ.

"ອັດຕະມາມີວິທີບໍ່ໃຫ້ຄົນນອກມາຕັດຕົ້ນໄມ້ຢູ່ບ້ານເຮົາແລ້ວ" ຄູບາສະເໜີຄວາມຄິດ.

"ຄັນຊັ້ນກະດີລະຕີ້!" ຕູ້ແດງ ແມ່ວໂຮມບ້ານເວົ້າດ້ວຍຄວາມດີໃຈ.

"ຄູບາຊິເຮັດແນວໃດຂະນ້ອຍ?" ນາຍບ້ານຖາມ.

"ພວກເຮົາຕ້ອງບວດຕົ້ນໄມ້" ຄູບາຕອບ.

"ບວດຕົ້ນໄມ້ແນວໃດຄູບາ? ບໍ່ແມ່ນຄົນໃດ!" ນາຍບ້ານຕໍ່ວ່າ.

"ຊິຍາກຫຍັງ! ເອົາຜ້າຄຸມເກົ່າໆຂອງອັດຕະມານີ້ແຫລະໄປພັນຕົ້ນໄມ້ໄວ້"

ມື້ຕໍ່ມາຊາວບ້ານກໍປະຕິບັດຕາມຄຳແນະນຳຂອງຄູບາລອງເບິ່ງ ບາງຄົນຍັງບໍ່ແນ່ໃຈວ່າຈະໄດ້ຜົນຫລືບໍ່ ແຕ່ກໍເຮັດລອງເບິ່ງ ບໍ່ລອງບໍ່ຮູ້. ໜຶ່ງອາທິດຜ່ານໄປບໍ່ມີເຫດການຫຍັງເກີດຂຶ້ນ ແຕ່ພໍກ້າວເຂົ້າອາທິດທີສອງ ຄົນຈາກໃນເມືອງກໍເຂົ້າມາໃນປ່າຂອງບ້ານອີກ ທຳອິດພວກເຂົາແປກໃຈທີ່ເຫັນຜ້າຈີວອນເຫລືອງມັດອ້ອມຕົ້ນໄມ້ຢູ່ ແຕ່ແລ້ວພວກເຂົາກໍແກ້ມັນອອກ ແລ້ວຕັດໄມ້ດູ່ໄປອີກສອງຕົ້ນ. ເມື່ອຊາວບ້ານຮູ້ກໍເປັນເດືອດເປັນແຄ້ນ ຟ້າວໄປລາຍງານຄູບາບຸນມີວ່າວິທີການຂອງເພິ່ນບໍ່ໄດ້ຜົນ.

"ບະ! ຄົນພວກນີ້ເຫັນແກ່ໄດ້ ບໍ່ຢ້ານບາບຢ້ານກຳຫຍັງ! ແບບນີ້ມັນຕ້ອງໃຊ້ມາດຕະການເດັດຂາດໃສ່ກັນແລ້ວ ເປັນຫຍັງເປັນກັນ" ຄູບາເວົ້າດ້ວຍອາລົມຮ້າຍ.

ສາມມື້ຕໍ່ມາ ຢູ່ໃນບ້ານມີເດັກນ້ອຍຜູ້ຊາຍອາຍຸ 10 ປີ ຕາຍຍ້ອນສາເຫດອັນໃດກໍບໍ່ຮູ້ ພໍດີຕອນນັ້ນຄົນຈາກໃນເມືອງຂີ່ລົດສິບລໍ້ແລ່ນຜ່ານບ້ານມຸ່ງໜ້າໄປປ່າຫົວບ້ານ ຊາວບ້ານເຫັນແນວນັ້ນກໍຟ້າວໄປບອກຄູບາ. ພວກຜູ້ຊາຍສອງສາມຄົນເຂົ້າໄປໃນກຸຕິພ້ອມຄູບາ. ບໍ່ດົນຄົນພວກນັ້ນກໍໄຂປະຕູອອກມາແລ້ວພາກັນໄປບອກຄົນອື່ນໆຢູ່ໃນບ້ານ. ຫລັງຈາກນັ້ນຜູ້ເຖົ້າຜູ້ແກ່ແມ່ຍ່າແມ່ຍິງພ້ອມດ້ວຍເດັກນ້ອຍ ກໍພາກັນຖືພ້າຖືຂວານແລະໜ້າເກັກແລ່ນເປັນພຶງກັນມຸ່ງໜ້າສູ່ປ່າ.

ໃນຂະນະທີ່ຜູ້ຊາຍໄວກາງຄົນ ຮ່າງກາຍດຳປົກ ກ້າມເປັນມັດໆກຳລັງຕິດຈັກສະຕິງ ເພື່ອຕຽມຈະຕັດໄມ້ແຄນຕົ້ນໜຶ່ງຢູ່ນັ້ນ ຊາວບ້ານພ້ອມດ້ວຍອາວຸດຄົບມືກໍອອກມາຈາກທຸກຈອກທຸກແຈຂອງປ່າແລ້ວອ້ອມຄົນພວກນັ້ນໄວ້.

"ຢຸດດຽວນີ້! ຍ້ອນພວກເຈົ້າມາຕັດຕົ້ນໄມ້ຢູ່ປ່ານີ້ ເຈົ້າພໍ່ມະເຫສັກຈຶ່ງມາເຮັດໃຫ້ເດັກນ້ອຍຂອງບ້ານເຮົາຕາຍ. ຖ້າພວກເຈົ້າບໍ່ເຊົາ ຈະມີຄົນຕາຍອີກ ສະນັ້ນພວກເຮົາຍອມບໍ່ໄດ້" ນາຍບ້ານຂູ່ພວກເຂົາ.

"ແມ່ນແທ້ຊັ້ນບໍ?" ຜູ້ຊາຍທີ່ເປັນຫົວໜ້າຖາມດ້ວຍຄວາມສົງໄສ.

"ບໍ່ເຊື່ອກໍໄປເບິ່ງແມ້ ຢູ່ໃນບ້ານຫັ້ນ!" ນາຍບ້ານເວົ້າສຽງແຂງ.

ຜູ້ຊາຍທີ່ເປັນຫົວໜ້າສົ່ງລູກນ້ອງສອງຄົນເຂົ້າໄປໃນບ້ານ ບໍ່ດົນພວກເຂົາກໍກັບມາ ແລ້ວບອກຄວາມຈິງຕໍ່ນາຍຂອງເຂົາ. ໃນທີ່ສຸດພວກເຂົາກໍເລີກລົ້ມການຕັດໄມ້ຢູ່ໃນປ່າບ້ານໄຮ່.

ມື້ຕໍ່ມາຄູບາບຸນມີກໍຢາດນ້ຳແລະແຜ່ເມດຕາໄປຫາເດັກນ້ອຍຜູ້ຊາຍຄົນນັ້ນ.

"ຍ້ອນໂຕແທ້ໆ ພວກຕັດໄມ້ຈຶ່ງບໍ່ມາລົບກວນປ່າບ້ານເຮົາອີກ ຂໍໃຫ້ໂຕໄປສູ່ສຸຄະຕິເທີ້ນບັກນ້ອຍ!"

# ຄຳປະຕິຍານຂອງຊຽງເຄນ

*ໂດຍ: ໄພສິຖາມ*

ຊຽງເຄນຍັງຈື່ໄດ້ເມື່ອປີທີ່ແລ້ວ ເຂົານຳປືນແກັບໄປມອບໃຫ້ທາງການພ້ອມກັບໃຫ້ຄຳປະຕິຍານວ່າຈະບໍ່ລ່າສັດຕັດໄມ້ເຖື່ອນອີກ ນອກຈາກເຂົ້າປ່າຫາສະໝຸນໄພມາເປັນຢາຮັກສາໂລກແລະເກັບຜັກຫັກໜໍ່ເທົ່ານັ້ນ.

ແຕ່ມາມື້ນີ້ຊຽງເຄນກຳລັງຈະລ່ວງລະເມີດຄຳປະຕິຍານ!

ສຽງອ້ອກອ້າກຮາກຫລັ່ງຮາກໄຫລຂອງນາງເມຍຕັ້ງແຕ່ເຊົ້າ ຊຶ່ງຊຽງເຄນຮູ້ດີວ່າແມ່ນອາການແພ້ທ້ອງຂອງເມຍທີ່ກຳລັງຕັ້ງທ້ອງໄດ້ເດືອນປາຍມັນໄດ້ສ້າງຄວາມດີໃຈຢ່າງລົ້ນເຫລືອໃຫ້ແກ່ລາວ. ວຽກບ້ານງານສວນແມ່ນບໍ່ໃຫ້ນາງເມຍແຕະຕ້ອງແຕ່ຢ່າງໃດ ລາວຮັບເຮັດຮັບທຳໝົດທຸກຢ່າງແລະບໍ່ວ່າເມຍຢາກກິນຫຍັງລະແມ່ນຫາມາໃຫ້ກິນຈົນໄດ້ ບໍ່ເກີນຄວາມພະຍາຍາມຂອງລາວ.

"ອ້າວ! ມື້ນີ້ເຈົ້າແພ້ທ້ອງຫລາຍບໍ່ວັນດີ" ຊຽງເຄນຍ່າງເຂົ້າມາລູບຫລັງນາງເມຍ "ຢາກກິນອັນໃດກໍບອກແມ່ ເພື່ອແກ້ແພ້ທ້ອງ ຈັກໜ່ອຍຊິໄປຊອກຫາມາໃຫ້"

"ຂ້ອຍຢາກກິນລາບໄກ່ປ່າ ຢາກມາໄດ້ສອງສາມມື້ແລ້ວ" ນາງເມຍບອກແລ້ວກໍກົ້ງຄໍຮາກເປັນໄລຍະ ມີແຕ່ນ້ຳລາຍໝຽວຍືດໆແລ້ວກໍໃຊ້ນ້ຳບ້ວນປາກ ອາຫານເຊົ້າມື້ນີ້ອອກໝົດບໍ່ມີເຫລືອ.

ຊຽງເຄນຢືນຊຶງ... ລາວຈະໄປຫາຊີ້ໄກ່ປ່າໄດ້ຢູ່ໃສນໍ້. ພວກນາຍພານກໍປ່ຽນອາຊີບໝົດແລ້ວ ຮວມທັງຕົວຊຽງເອງ... ຢູ່ປ່າສະຫງວນໃກ້ບ້ານກໍມີແຕ່ໄກ່ປ່າຝູງດຽວເທົ່ານັ້ນທີ່ເຄີຍເຫັນຜ່ານມາ. ບາດນີ້ຄວາມຄິດທີ່ຜິດແລະຖືກແຍກເປັນສອງຝ່າຍສູ້ຮົບກັນຢູ່ໃນສະໝອງ, ຝ່າຍໜຶ່ງບໍ່ຢາກຜິດຄຳສັນຍາສາບານທີ່ໃຫ້ໄວ້ກັບທາງການ ອີກຝ່າຍໜຶ່ງຊ້ຳເປັນຫ່ວງນາງເມຍທີ່ອຶດສາມີລູກກັບຕົນຜູ້ທຳອິດ.

ຊຽງເຄນບໍ່ຮູ້ແນວຊິເຮັດ ຍ່າງໄປຍ່າງມາຢູ່ກາງເຮືອນເໝືອນຄົນໃຊ້ຄວາມຄິດໜັກ ແລະໃນທີ່ສຸດກໍຢຸດຈົກ ຫລຽວເບິ່ງໜ້າເກັກເກົ່າທີ່ຫ້ອຍຢູ່ແຈຝາເຮືອນພ້ອມດ້ວຍລູກໜ້າຫ້າຫົກລູກ ສຽບໄວ້ນຳບັ້ງໄມ້ເຮັຍຫ້ອຍຕ່ອນ

ແຕ້ນ ຊຶ່ງລາວເຊົານຳໃຊ້ມັນນັບຕັ້ງແຕ່ໄດ້ປືນແກັບມາເປັນອາວຸດລ່າສັດປ່າຄາວນັ້ນ ລາວຈຶ່ງເກັບຮັກສາໄວ້ເປັນທີ່ລະລຶກ.

ສຽງເມຍຮາກອັອກໆຢູ່ບໍ່ເຊົາ ມັນໄດ້ບາດເລິກເຂົ້າໃນຫົວໃຈ!

ແດດຍາມບ່າຍເຈີດຈ້າ ຊຽງເຄນລີ້ຢູ່ໃນສຸມປ່າກໍເລົາຖ່ອມຫົວ ຫລຽວອອກໄປທາງດົງປ່າສະຫງວນມີຕົ້ນຫຍ້າພຽງຫົວເຂົ່າເປັນຍ່ອມໆ ມີຕົ້ນໄມ້ຢືນຕົ້ນສູງລຽງລາຍ ມີຕົ້ນໄມ້ຕາຍຢືນ ເຫລືອແຕ່ກິ່ງງ່າຕົ້ນໜຶ່ງ ລາວເຄີຍເຫັນຝູງໄກ່ປ່າທີ່ຫລົງເຫລືອຈາກການລ່າຂອງພວກນາຍພານຄາວນັ້ນ ມາຫາກິນຢູ່ແຖວແຄມປ່າດົງແຫ່ງນີ້.

ລາວນັ່ງລີ້ຢູ່ຄາວໜຶ່ງກໍເລີ່ມມີສິ່ງຜິດປົກກະຕິເກີດຂຶ້ນຢູ່ທາງໜ້າ

"ມັນໂຜ່ມາແລ້ວໄກ່ປ່າໂຕແມ່ ສີນ້ຳຕານລາຍດຳ ຈັກໜ່ອຍກໍຄົງຈະເຫັນໄກ່ປ່າໂຕຜູ້ຂົນງາມໆເຜີຍໂສມອອກມາແນ່ນອນ" ຊຽງເຄນຄິດຢູ່ໃນໃຈພ້ອມທັງຍິ້ມນ້ອຍໆອອກມາທ່າມກາງຄວາມມິດງຽບຢູ່ກາງສຸມປ່າກໍເລົາ.

ຊຽງເຄນຮີບຫ້າງໜ້າເກັກພ້ອມກັບເໜັບລູກໜ້າໃສ່ທັນທີ ໄລຍະຫ່າງພຽງແຕ່ຫ້າຫົກແມັດເທົ່ານັ້ນ ອະດີດນາຍພານຢ່າງຊຽງເຄນຮັບຮອງວ່າບໍ່ມີພາດກະແລ້ວກັນ ແຕ່ສິ່ງທີ່ຄິດໄວ້ພັດປ່ຽນໄປທັນທີ ກາຍເປັນລູກໄກ່ປ່າໂຕນ້ອຍໆຈຳນວນຫ້າໂຕແລ່ນອອກມາຈາກພຸ່ມຫຍ້າຕາມສຽງຮ້ອງກຸກໆຂອງແມ່ທີ່ກຳລັງເຂ່ຍດິນຊອກຫາເຫຍື່ອໃຫ້ລູກຂອງມັນ.

ເຖິງຈະຮູ້ສຶກຜິດຫວັງແດ່ກໍຕາມ ຊຽງເຄນກໍບໍ່ຢາກລໍໃຫ້ເສຍເວລາເພາະນຶກເປັນຫ່ວງນາງເມຍຢູ່ທາງບ້ານຄົນດຽວ.

"ໂຕແມ່ກະເອົາເອີ້ຍ ຊີ້ນມັນກະແຊບຄືກັນນັ້ນແຫລະ" ເຂົາເວົ້າກັບຕົວເອງແລ້ວເລັງໜ້າເກັກໃສ່ໄກ່ແມ່ທັນທີແຕ່...

"ກຣອດດດດ...." ແມ່ໄກ່ປ່າຮ້ອງສຽງຍາວສັ່ນ ພ້ອມທັງຫງ່ຽງຄໍຫລຽວເບິ່ງເທິງຟ້າ ສຽງຂອງມັນເປັນສັນຍານເຕືອນໄພບາງຢ່າງໃຫ້ລູກໆຮີບຫລົບໜີເຂົ້າໄປລີ້ຢູ່ໃນພຸ່ມຫຍ້າ ເບິ່ງຄືວ່າຈະຊ້າໄປ ຍັງມີລູກນ້ອຍຂອງມັນອີກສອງໂຕທີ່ຫລົບເຂົ້າບໍ່ທັນ.

ແຫລວບີ້ເຈີດລົງມາຈາກທ້ອງຟ້າ ຈູ່ໂຈມເປົ້າໝາຍຫຍຸມເອົາໄກ່ນ້ອຍດ້ອຍກົງເລັບທີ່ແຫລມຄົມ ແຕ່ກໍເປັນຈັງຫວະທີ່ແມ່ໄກ່ປ່າທະຍານບິນຂຶ້ນເພື່ອປົກປ້ອງລູກຂອງມັນ ສັດທັງສອງສັບຈິກຕີກັນຢ່າງຊຸນລະມຸນຈົນແຫລວບີ້ຕ້ອງພາດໂອກາດຢ່າງໜ້າເຈັບໃຈ ເພາະໂຕນ້ອຍກວ່າແມ່ໄກ່ປ່າ ແຕ່ມັນບໍ່ໜີໄປໃສ ມັນບິນວົນວຽນກັບມາຈັບຢູ່ຕົ້ນໄມ້ຕາຍຢືນຕົ້ນນັ້ນ.

ມັນເປັນເຫດການທີ່ເກີດຂຶ້ນປຸບປັບໄວວາ ຊຽງເຄນໄດ້ແຕ່ຖືໜ້າເກັກຄ້າງໄວ້ຈົນແມ່ໄກ່ປ່າກັບມາຫາລູກໆ ມັນຄ່ອຍສົ່ງສຽງເຕືອນໃຫ້ລູກໆອອກຈາກພຸ່ມຫຍ້າ ສັດຕູນັກລ່າຍັງຈັບຢູ່ເທິງງ່າໄມ້ເພື່ອລໍຖ້າໂອກາດໃໝ່ທີ່ຈະຈູ່ໂຈມ.

ຊຽງເຄນເລີກສົນໃຈກັບເຫດການທີ່ເກີດຂຶ້ນ ຂໍແຕ່ໃຫ້ໄດ້ໄກ່ປ່າຕິດມືກັບບ້ານກໍເປັນພໍ ເຂົາເລັງໜ້າເກັກໄປທີ່ແມ່ໄກ່ປ່າອີກເທື່ອໜຶ່ງ.

"ກຣອດດດດ..."

ລາວຢຸດຊະງັກເມື່ອເຫັນແມ່ໄກ່ປ່າກົ້ມຫົວລົງກາງປີກເຮັດຂົນພອງສົ່ງສຽງນາບຂູ່ ມັນຫລຽວເບິ່ງໄປຂ້າງໜ້າສະຫລັບກັບທາງຽງຄໍຫລຽວເບິ່ງແຫລວບີ້ໂຕນັ້ນ ລາວຫລຽວຕາມທ່າທາງຂອງແມ່ໄກ່ປ່າ ຊຶ່ງທາງອອກໄປທາງດ້ານຂວາບໍ່ຮອດສອງແມັດ ຮ່າງສີນ້ຳຕານແດງທັງຕົວ ຍາວປະມານສອກໜຶ່ງປະກົດແກ່ສາຍຕາ ຈ້ອງໄປຫາກຸ່ມເຫຍື່ອທີ່ຈະເປັນອາຫານລົດໂອຊະ.

ຈອບຟອບ!

ຍາມນັ້ນແມ່ໄກ່ປ່າມີທ່າທີທ່ອງໜ້າພະວົງຫລັງ ເຖິງປານນັ້ນກໍພ້ອມທີ່ຈະເອົາຊີວິດເປັນເດີມພັນເພື່ອລູກຂອງມັນໄດ້ດ້ວຍສັນຊາດຕະຍານຂອງຜູ້ເປັນແມ່ ຫາກສັດຕູນັກລ່າທັງສອງເຂົ້າມາໂຈມຕີ.

ບໍ່! ບໍ່ແມ່ນມີສັດຕູພຽງແຕ່ສອງ... ມັນມີຮອດສາມຕ່າງຫາກ!

ຊຽງເຄນຍັງມີຄວາມຄິດຕັ້ງໃຈມຸ່ງໝັ້ນເດັດດ່ຽວທີ່ຈະດັບຊີວິດແມ່ໄກ່ປ່າໃຫ້ໄດ້ ສ່ວນລູກໂຕນ້ອຍໆກໍປ່ອຍໄປຕາມຍະຖາກຳຂອງພວກມັນ ເຂົາເລັງໜ້າເກັກເປັນຄັ້ງທີສາມ ພັດບັງເກີດພາບແຫ່ງອະນາຄົດໃນຫ້ວງຄວາມຄິດ...

ລາວເຫັນນາງວັນດີເມຍຮັກກຳລັງຈູງລູກນ້ອຍໄປຫາເກັບຜັກຢູ່ໃນປ່າພົບສັດຕູມຸ່ງໝາຍທຳຮ້າຍລູກ ນາງວັນດີໂດດເຂົ້າໄປປົກປ້ອງດ້ວຍຊີວິດ...

ຊຽງເຄນຮີບຕັດພາບນັ້ນອອກ ຈິດໃຈເຂົາເລີ່ມສັ່ນຄອນ ເກີດເຫັນພາບໃໝ່ຂຶ້ນມາແທນ ເປັນພາບທີ່ນາງວັນດີກຳລັງຮາກຫລັ່ງຮາກໄຫລເມື່ອຕອນເຊົ້າເພາະອາການແພ້ທ້ອງ ລາວຫລັບຕາສະມາທິເພື່ອໃຫ້ໃຈໜັກແໜ້ນແລ້ວມືນຕາຂຶ້ນພ້ອມທັງເລັງໜ້າເກັກໄປຫາເປົ້າໝາຍອີກເທື່ອໜຶ່ງ ແລ້ວເກາະໄກຕາມທີ່ໃຈບັນຊາ.

ເກັກ... ຈຸບ!

ນາງວັນດີກິນເຂົ້າແລງມື້ນີ້ຮູ້ສຶກແຊບເປັນພິເສດ ບໍ່ຮູ້ສຶກເໝັນຄາວເຮັດ



ຫ້າມຈຳໜ່າຍ

ໃຫ້ປອດຮາກເລີຍ ຊຽງເຄນຍິ້ມແປ້ນກັບສີມືເຮັດລາບຂອງຕົນເອງ ທັງສອງກິນອີ່ມແທ້ອີ່ມວ່າ ຫລັງຈາກມ້ຽນພາເຂົ້າແລ້ວກໍພາກັນມານັ່ງຢູ່ເຊຍ ໂອ້ລົມກັນຕາມພາສາຜົວເມຍ.

"ຂ້ອຍຮູ້ດີວ່າລາບທີ່ພວກເຮົາກິນນັ້ນບໍ່ແມ່ນໄກ່ປ່າ" ນາງເມຍເວົ້າຂຶ້ນໃນຂະນະກຳລັງຈິ້ມແຂ້ວ "ເຖິງເຈົ້າຈະຟັກທັງຊີ້ນທັງກະດູກຈົນລະອຽດ ແຕ່ກິ່ນມັນບອກວ່າບໍ່ແມ່ນໄກ່ປ່າ" ປິດທ້າຍດ້ວຍຮອຍຍິ້ມທີ່ຮູ້ທັນກັນ.

ຊຽງເຄນຍິ້ມແກ້ເກີ້ພ້ອມແກ້ຕົວ "ຂ້ອຍເຫັນເຈົ້າມັກຈົ່ມເລື່ອງປອດຫລັງປອດແອວເວລາກົ້ມໆເງີຍໆ ກໍເລີຍຫາຢາແກ້ມາໃຫ້ ພໍ່ຂອງຂ້ອຍເຄີຍບອກວ່າມັນແກ້ໄດ້ດີ"

"ແຕ່ຂ້ອຍກໍແປກໃຈທີ່ບໍ່ຮູ້ສຶກມີກິ່ນຄາວຫລືປອດຮາກເໝືອນກັບກິນແນວອື່ນ ພັດກິນໄດ້ດີອີກດ້ວຍ" ນາງເມຍເວົ້າອອກມາດ້ວຍໃຈຈິງ.

"ຂ້ອຍວ່າເຈົ້າເກີດປີງູ ຈຶ່ງບໍ່ຖືກກັບມັນລະບໍ້" ແລ້ວທັງສອງກໍຫົວຂຶ້ນພ້ອມໆກັນຢ່າງມີຄວາມສຸກ.

ໃນໃຈຂອງຊຽງເຄນເກີດມີຄວາມສຸກຢ່າງໜ້າປະຫລາດ ເຂົາບໍ່ເຄີຍມີຄວາມຮູ້ສຶກແບບນີ້ມາກ່ອນເລີຍ ອະດີດຊີວິດນາຍພານທີ່ເດີນຕາມຮອຍຂອງພໍ່ມີແຕ່ປະຫັດປະຫານຊີວິດສັດ ແລ້ວນຳອອກມາຈາກປ່າ ບໍ່ເຄີຍເຫັນຊີວິດຂອງພວກມັນກັບເຂົ້າສູ່ປ່າເລີຍຈັກຄັ້ງ.

ແຕ່ມື້ນີ້ເຂົາຄິດວ່າໄດ້ທຳສິ່ງທີ່ຖືກຕ້ອງແລ້ວແລະເຊື່ອໝັ້ນໃນຕົວແມ່ໄກ່ປ່າຈະສາມາດຄຸ້ມຄອງລູກໆຂອງມັນໃຫ້ພົ້ນປາກແຫລວນີ້ໂຕນັ້ນໄດ້.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ